# ນາງສຸພົນ

ຂຽນໂດຍ ນາງ ຈີນ ແອນດຣີອານອພ

ແຕ້ມໂດຍ ນາງ ນາທາຊ່າ ສະຕຸດລີ



# ນາງສຸພິນ

ຂຽນໂດຍ **ນາງ ຈີນ ແອນດຣີອານອພ**

ແຕ້ມໂດຍ **ນາງ ນາທາຊ່າ ສະຕຸດລີ**

# ເລື່ອງຂອງ ນາງ ສຸພິນ

ເລື່ອງນີ້ເປັນເລື່ອງຈິງກ່ຽວກັບ ນາງສຸພິນ. ນາງເປັນຍິງຄົນໜຶ່ງ ທີ່ອາໄສຢູ່ປະເທດລາວ ເມື່ອຫຼາຍປີຜ່ານມາແລ້ວ.

ໃນເວລາທີ່ ສຸພິນ ມີອາຍຸໄດ້ 5 ປີ ນາງໄດ້ຖືກຂາຍໃຫ້ໄປເປັນຄົນຮັບໃຊ້. ໃນຕອນທີ່ນາງມີອາຍຸ 12 ປີ ນາງໄດ້ເປັນພະຍາດຂີ້ທູດຢ່າງຮ້າຍແຮງ.

ໃນເວລານັ້ນ ບໍ່ມີຢາປົວພະຍາດຂີ້ທູດເລີຍ ຊຶ່ງເປັນພະຍາດທີ່ຜູ້ຄົນລັງກຽດ ຈົນບໍ່ໃຫ້ດໍາລົງຊີວິດຮ່ວມໃນໝູ່ບ້ານ ແລະສັງຄົມ. ສະນັ້ນ ບັນດາຄົນທີ່ເປັນພະຍາດຂີ້ທູດ ຈຶ່ງຖືກແຍກອອກໄປຢູ່ອີກບ້ານແຫ່ງໜຶ່ງ ທີ່ຫ່າງໄກອອກໄປ ແລະຖືກປິດບ້ານແບບຄົນໃນບໍ່ໃຫ້ອອກ ຄົນນອກບໍ່ໃຫ້ເຂົ້າໃນບ້ານຂີ້ທູດແຫ່ງນັ້ນ. ແຕ່ໃນປະຈຸບັນນີ້ ມີຢາປົວພະຍາດຂີ້ທູດແລ້ວ.

ຢູ່ໃນເລື່ອງນີ້ ມີສອງຄອບຄົວ ທີ່ມາຈາກ ປະເທດສະວິດເຊີແລນ ກໍໄດ້ດຳລົງຊີວິດຢູ່ ໃນປະເທດລາວໃນເວລາດຽວກັນກັບ ສຸພິນ.

ເລື່ອງລາວຂອງ ສຸພິນ ໄດ້ຖືກເລົ່າໂດຍບຸກຄົນທີ່ແຕກຕ່າງກັນເຊັ່ນວ່າ:

- ແມ່ຂອງ ສຸພິນ ຢູ່ໃນປະເທດຈີນ
- ນາຍຄຳ ພໍ່ຄ້າຈາກແຂວງສະຫວັນນະເຂດ
- ທ່ານ ວິວລີ ອາຈານສອນຈາກປະເທດສະວິດເຊີແລນ ໃນເມືອງແກ້ງກອກ
- ທ່ານໝໍ ຈາກປະເທດສະວິດເຊີແລນ ໃນເມືອງສອງຄອນ
- ທ້າວ ບຸນມີ ອີກຜູ້ໜຶ່ງທີ່ເປັນພະຍາດຂີ້ທູດຈາກ ປາກເຊ
- ນາຍບ້ານຊື່ ຄຳແພງ
- ນາງສະຫວ່າງ ໝູ່ຂອງ ສຸພິນ.

ຂໍໃຫ້ ພຣະເຈົ້າ ຊົງອວຍພອນທ່ານ
ໃນຂະນະທີ່ທ່ານອ່ານເລື່ອງຂອງ ສຸພິນ.



# ຕອນທີ 1

ເລົ່າໂດຍແມ່ຂອງ ສຸພິນ

ຢູ່ທາງພາກໃຕ້ຂອງ ປະເທດຈີນ

ປີ 1927

ໃນຊີວິດຂອງຂ້ອຍມັນຊ່າງໜ້າອາພັບ ແລະບໍ່ມີຄຸນຄ່າຫຍັງເລີຍ. ຂ້ອຍຮູ້ສຶກໂສກເສົ້າເສຍໃຈຫຼາຍ ຫາຫຍັງປຽບບໍ່ໄດ້ ຈົນຫົວໃຈແທບຊິຂາດ, ໃນມື້ນີ້ ຜົວຂອງຂ້ອຍໄດ້ຂາຍລູກສາວຄົນນ້ອຍຊື່

ສຸພິນ ເພື່ອແລກເອົາເງິນໄປຊື້ຢາຝິ່ນ. ຊີວິດຂອງຂ້ອຍໃນເມື່ອກ່ອນ ບໍ່ເຄີຍພົບກັບບັນຫາທີ່ໂຫດຮ້າຍແບບນີ້.

ຄັ້ງໜຶ່ງ ຂ້ອຍເຄີຍເປັນຍິງສາວທີ່ງາມທີ່ສຸດໃນໝູ່ບ້ານຂອງ ພວກເຮົາ. ຂ້ອຍຮູ້ແບບນີ້ ກໍຍ້ອນວ່າມີຊາຍໜຸ່ມຫຼາຍຄົນທີ່ສົນໃຈ ຂ້ອຍ, ຢາກເປັນຄົນຮັກຂອງຂ້ອຍ ແຕ່ວ່າຂ້ອຍບໍ່ໄດ້ສົນໃຈເລີຍ. ຖ້າຫາກຂ້ອຍແຕ່ງງານກັບໜຶ່ງໃນຊາຍໜຸ່ມເຫຼົ່ານັ້ນ, ຊີວິດຂອງ ຂ້ອຍກໍຄົງແຕກຕ່າງຈາກນີ້ຫຼາຍ, ເຖິງແມ່ນວ່າເຂົາເຈົ້າຈະເປັນພຽງ ລູກຊາວໄຮ່ຊາວນາຍາກຈົນກໍຕາມ.

ແຕ່ວ່າພໍ່ແມ່ຂອງຂ້ອຍຊໍ້າພັດພາກພູມໃຈຫຼາຍ ທີ່ມີພໍ່ຄ້າຈາກ ເມືອງໃຫຍ່ໄດ້ມາຂໍໃຫ້ຂ້ອຍແຕ່ງງານກັບລູກຊາຍຂອງລາວ. ພໍ່ແມ່ ຂອງຂ້ອຍບໍ່ມີເງິນເຮັດງານດອງຫຼາຍ, ສະນັ້ນ ເພິ່ນຈຶ່ງຄິດວ່າ ພວກ ເຮົາໂຊກດີຫຼາຍ ທີ່ມີຄອບຄົວຈາກໃນເມືອງໃຫຍ່ຕ້ອງການຂ້ອຍ. ແລະເງິນຄ່າດອງກໍໄດ້ຫຼາຍກວ່າທີ່ທຸກຄົນໃນໝູ່ບ້ານແຫ່ງນີ້ໄດ້ຮັບ. ສະນັ້ນ ພໍ່ແມ່ຂອງຂ້ອຍຈຶ່ງຕອບຮັບພວກເຂົາດ້ວຍຄວາມດີໃຈ.

ໃນຕອນທີ່ຂ້ອຍໄດ້ເຫັນຜົວຂອງຂ້ອຍ, ຂ້ອຍກໍຮູ້ສຶກພູມໃຈຫຼາຍ. ລາວເປັນຄົນຮູບຮ່າງງາມຫຼາຍ. ແລະຍັງເປັນຄົນສຸພາບຮຽບຮ້ອຍກວ່າຄົນອື່ນໃນໝູ່ບ້ານຊົນນະບົດແຫ່ງນີ້. ແຕ່ວ່າບໍ່ດົນ ຂ້ອຍກໍໄດ້ຮູ້ຄວາມຈິງວ່າ ເປັນຫຍັງພໍ່ແມ່ຂອງລາວຈຶ່ງຊອກຫາເຈົ້າສາວທີ່ຮອດບໍ່ຮູ້ແມ່ນແຕ່ວ່າເປັນຍິງແນວໃດໃຫ້ລູກຊາຍຕົນເອງ.

ລາວເປັນຄົນຕິດຢາຝິ່ນ ແລະລາວໄດ້ໃຊ້ເວລາສ່ວນໃຫຍ່ຂອງຕົນ ນອນຢູ່ແຕ່ໃນບ່ອນພ້ອມກັບບັ້ງດູດຢາຝິ່ນ. ພໍ່ແມ່ຂອງລາວຕາມໃຈລາວຫຼາຍຈົນກາຍເປັນຄົນບໍ່ດີ, ເພິ່ນໄດ້ເອົາເງິນໃຫ້ລາວຫຼາຍເທົ່າທີ່ລາວຕ້ອງການ ເພື່ອຊື້ຢາຝິ່ນ. ເມື່ອພໍ່ແມ່ຂອງລາວເສຍຊີວິດ ທັງບໍ່ມີຜູ້ໃດຫາເງິນໃຫ້ລາວຊື້ຢາຝິ່ນ, ລາວໄດ້ຮີບຂາຍມູນມໍຣະດົກທີ່ມີຢູ່ ແລະໃຊ້ຈ່າຍໝົດຢ່າງໄວວາ.

ພວກເຮົາໄດ້ຂາຍເຮືອນຂອງພໍ່ແມ່ລາວ, ແລະຫຼັງຈາກນັ້ນ ກໍໄດ້ຂາຍເຄື່ອງຂອງທີ່ມີຄ່າ. ລາວບໍ່ເຄີຍຫາເງິນເອງໄດ້ເລີຍ, ແຕ່ວ່າລາວຊ້ຳພັດເຮັດໃຫ້ຂ້ອຍມີລູກຕິດຕໍ່ກັນຫຼາຍຄົນ. ພວກເຮົາມີລູກຫ້າຍປີແລະຫົວປີຫຼາຍຄົນທີ່ຕິດຕໍ່ກັນ ແລະສ່ວນຫຼາຍເປັນລູກຜູ້ຍິງ



ທີ່ບໍ່ມີຄຸນຄ່າ. ແຕ່ວ່າຂ້ອຍໄດ້ຕັ້ງຊື່ທີ່ມີຄວາມໝາຍໃຫ້ພວກເຂົາ ແລະມີຄວາມຫວັງວ່າຊີວິດຂອງພວກເຂົາ ຈະມີຄຸນຄ່າຈາກຊື່ຂອງພວກເຂົາເອງ.

ຂ້ອຍໄດ້ເລີ່ມຂາຍຊາລະເປົາຢູ່ຕະຫຼາດ. ຖ້າມື້ໃດຂ້ອຍສາມາດຫາເງິນໄດ້ພໍກັບທີ່ຜົວຂອງຂ້ອຍຕ້ອງການຊື້ຢາຝິ່ນ ລາວກໍຈະດີໃຈຫຼາຍ.

ແຕ່ຖ້າມື້ໃດທີ່ຂ້ອຍບໍ່ສາມາດຫາເງິນໄດ້ພໍກັບຄວາມຕ້ອງການຂອງລາວ ລາວກໍຈະຕົບຕີຂ້ອຍ. ສະນັ້ນ ຂ້ອຍຕ້ອງຊອກຫາບ່ອນເຊື່ອງເງິນທີ່ຂ້ອຍຫາມາໄດ້. ຖ້າບໍ່ເຮັດດັ່ງນັ້ນ ຂ້ອຍກໍຈະບໍ່ມີເງິນຊື້ເຄື່ອງເຮັດຊາລະເປົາອີກໃນມື້ຕໍ່ໄປ. ລາວໄດ້ໃຊ້ເງິນທຸກກີບທີ່ຂ້ອຍຫາມາໄດ້ ເພື່ອຊື້ຢາຝິ່ນ.

ຄວາມໂລບມາກໂລພາເພື່ອຢາກໄດ້ເງິນຊື້ຢາຝິ່ນຂອງລາວບໍ່ມີມື້ພໍ. ສະນັ້ນ ມື້ນີ້ ສຸພິນ ຈໍາຕ້ອງຈາກຄອບຄົວໄປໂດຍຖືກຂາຍໃຫ້ກັບພໍ່ຄ້າຈາກປະເທດລາວ. ຂ້ອຍຄິດວ່າ ພໍ່ຄ້າຄົນນັ້ນຈະຕ້ອງ

ຜິດຫວັງທີ່ຈະເອົາສຸພິນ ໄປເປັນຄົນຮັບໃຊ້ ເພາະນາງບໍ່ຮູ້ເຮັດຫຍັງເລີຍ.

ນາງມີອາຍຸ 5 ປີ. ນາງໄດ້ຊ່ວຍແມ່ໃນການລ້ຽງດູນ້ອງໆ, ແຕ່ວ່ານາງຂາຍເຄື່ອງຊ່ວຍແມ່ບໍ່ໄດ້ດີ ເພາະນາງເປັນຄົນຂີ້ອາຍ ແລະຂີ້ຢ້ານ.

ຜົວຂອງຂ້ອຍຈະເຮັດແນວໃດ ໃນເມື່ອລາວບໍ່ມີເດັກນ້ອຍທີ່ຈະຂາຍອີກແລ້ວ?

ຫົວອົກຂອງຄົນເປັນແມ່ທີ່ໄດ້ພັດພາກຈາກລູກໄປແມ່ນມີຄວາມໂສກເສົ້າເສຍໃຈຫຼາຍທີ່ສຸດຈົນຫາສິ່ງໃດປຽບບໍ່ໄດ້ເລີຍ, ຂ້ອຍໄດ້ຮ້ອງໄຫ້ຈົນຕາບວມ.

ໃນຄືນນີ້ ສຸພິນຈະຮ້ອງໄຫ້ຫຼືບໍ່? ທີ່ນາງຕ້ອງອາໄສຢູ່ກັບຄົນອື່ນ ທີ່ບໍ່ແມ່ນຄົນໃນຄອບຄົວຂອງນາງ? ຄົນເປັນພໍ່ໃຈດຳອຳມະຫິດແບບນີ້ໄດ້ແນວໃດ? ຊີວິດຂອງຂ້ອຍເປັນແບບນີ້ໄດ້ແນວໃດ?



# ຕອນທີ 2

ເລົ່າໂດຍ ນາຍຄຳ
ພໍ່ຄ້າໃນສະຫວັນນະເຂດ
ປີ 1928

ເສຍດາຍເງິນ! ເມື່ອໃດທີ່ຂ້ອຍຈະໄດ້ຮຽນຮູ້ວ່າ ສິ່ງທີ່ລາຄາຖືກໆ ບໍ່ໄດ້ເຮັດໃຫ້ຂ້ອຍມີກຳໄລຫຼາຍຂຶ້ນ? ເມື່ອຂ້ອຍຊື້ເດັກໂຕນ້ອຍໆ ທຳອິດ ຂ້ອຍຮູ້ສຶກພູມໃຈຫຼາຍ ທີ່ໄດ້ຊື້ນາງໃນລາຄາຖືກໆ. ຄຸນຄ່າຂອງນາງຄົງຈະທົດແທນເງິນຕົ້ນທຶນຂອງຂ້ອຍໄດ້ໃນບໍ່ດົນ. ຂ້ອຍຮູ້ວ່າ ເມຍຂອງຂ້ອຍຈະຕ້ອງໃຊ້ວຽກເດັກນ້ອຍຄົນນີ້ໄດ້ຫຼາຍຢ່າງ ລວມທັງການເຮັດວຽກຢູ່ໃນເຮືອນ ຫຼືຂາຍເຄື່ອງຢູ່ຕະຫຼາດ.

ພວກເຮົາຕັດສິນໃຈວ່າ ທຳອິດຈະໃຫ້ນາງນ້ອຍຄົນນີ້ ຂາຍເຄື່ອງຢູ່ທີ່ຕະຫຼາດ ໂດຍເລີ່ມຈາກການຂາຍສິ່ງງ່າຍໆ ຄື ຂະໜົມເຄັກ ແລະຢາສູບ. ແຕ່ວ່າ ນາງນ້ອຍຄົນນີ້ ພະຍາຍາມລີ້, ຫຼົບໜ້າ ເຮັດໃຫ້ຄົນອື່ນບໍ່ກ້າເຂົ້າມາຊື້. ເມື່ອມີຄົນເຂົ້າມາຊື້ ລາວກໍ ເຮັດໜ້າເປັນສີອາຍໆ.

ມີຄົນຈຳນວນໜ້ອຍ ທີ່ຍັງຄົງເຂົ້າມາຊື້ນຳນາງ ເພາະວ່າເຂົາ ຢາກໄດ້ຂະໜົມເຄັກ ແລະຢາສູບແທ້ໆ ແຕ່ວ່າພວກເຂົາຈ່າຍເງິນ ໃຫ້ນາງຕາມໃຈຂອງພວກເຂົາ ແລະເຖິງແມ່ນວ່າ ເດັກນ້ອຍຈະມີ ໃບໜ້າເປັນສີອາຍໆຢ້ານໆຕະຫຼອດ ແລະນາງກໍບໍ່ກ້າຂໍເງິນເຕັມ ລາຄາກັບພວກເຂົາ.

ພວກເຮົາໄດ້ຕົບຕີນາງຢ່າງຮຸນແຮງ ເພາະວ່ານາງຂາຍເຄື່ອງ ຫຼຸບທຶນ, ເຖິງແມ່ນວ່າພວກເຮົາຈະຕົບຕີນາງແນວໃດກໍຕາມ ນາງກໍ ຍັງບໍ່ກ້າຂໍເງິນນຳຄົນທີ່ສໍ້ໂກງນາງຢູ່ດີ. ບາງມື້ ນາງກໍກັບມາດ້ວຍ ຈຳນວນເງິນທີ່ພຽງພໍ, ເຖິງວ່າມີເງິນສົ່ງທີ່ພຽງພໍກໍຕາມ ນາງກໍຍັງ ເອົາເງິນໃຫ້ພ້ອມທັງຄວາມຢ້ານກົວ ແລະສັ່ນເຊັນ ເພາະວ່ານາງ

ຢ້ານພວກເຮົາຈະຕົບຕີນາງອີກ. ແມ່ນແຕ່ພວກເຮົາບໍ່ຢາກຕົບຕີນາງ ແຕ່ນາງຊໍ້າພັດເຮັດໃຫ້ພວກເຮົາໝິ່ນ ຫຼືຢາກຮ້າຍ ທັງເຮັດໃຫ້ພວກເຮົາຮູ້ສຶກຢາກຕົບຕີນາງ.

ພວກເຮົາເອົາອາຫານທີ່ດີໃຫ້ນາງກິນ, ບາງເທື່ອກໍເອົາຊີ້ນໃຫ້, ແຕ່ນາງຊໍ້າພັດນໍາອາຫານນັ້ນໄປເຊື່ອງໄວ້.

ອາດມີມື້ໜຶ່ງ ທີ່ພວກເຮົາຄົງຈະສິດສອນໃຫ້ນາງເຮັດວຽກໄດ້ດີຂຶ້ນ ຖ້າຫາກນາງບໍ່ເປັນພະຍາດຂີ້ທູດກ່ອນ. ເປັນເວລາດົນນານກ່ອນທີ່ພວກເຮົາຈະສັງເກດເຫັນ ຈຸດດ່າງເທິງໃບໜ້າຂອງນາງ. ແຕ່ວ່າ ຕໍ່ມາຈຸດສີຂາວນັ້ນ ໃຫຍ່ຂຶ້ນຈົນທຸກຄົນຮູ້ວ່ານາງເປັນພະຍາດຂີ້ທູດ. ມັນເປັນຕາຢ້ານຫຼາຍ!

ການລົງທຶນທັງໝົດຂອງພວກເຮົາແມ່ນເສຍໄປລ້າໆ. ແມ່ນແຕ່ວຽກເລັກໆນ້ອຍໆ ໃນເຮືອນພວກເຮົາກໍຍັງໃຊ້ນາງເຮັດບໍ່ໄດ້ ເພາະພວກເຮົາກໍຢ້ານຈະຕິດພະຍາດຂີ້ທູດຈາກນາງ.



ຂ້ອຍຄວນຈະໄລ່ນາງໃຫ້ໄປຢູ່ໃນປ່າໃນດົງ, ແຕ່ຂ້ອຍຄິດວ່າ ຖ້າຫາກໄລ່ເດັກນ້ອຍໆໄປຢູ່ປ່າຕາມລຳພັງຄົງຈະໂຫດຮ້າຍເກີນໄປ .

ໂຊກດີທີ່ຂ້ອຍມີຄວາມຄິດໜຶ່ງຂຶ້ນມາໃນສະໝອງ ຄືຂ້ອຍຮູ້ຈັກກັບອາຈານຄົນສະວິດເຊີແລນ ຜູ້ໜຶ່ງທີ່ຢູ່ບ້ານແກ້ງກອກ, ຂ້ອຍໄດ້ຍິນຄົນອື່ນເວົ້າວ່າ ອາຈານມາຈາກຕ່າງດ້າວ ເປັນຄົນມີຈິດໃຈເມດຕາ. ພວກເຂົາມັກເວົ້າເຖິງ ພຣະເຈົ້າຂອງພວກເຂົາ ທີ່ມີອຳນາດສາມາດປິ່ນປົວຄົນທີ່ເປັນພະຍາດຂີ້ທູດໄດ້.

ຖ້າຫາກຂ້ອຍນຳເດັກນ້ອຍຄົນນີ້ໄປໃຫ້ອາຈານ ວິວລີ ເປັນຂອງຂວັນ ລາວຈະປະຕິເສດບໍ່ໄດ້ເດັດຂາດ. ບາງທີ ຢາຂອງລາວ

ອາດຈະຊ່ວຍໃຫ້ນາງດີຂຶ້ນ. ອາຈານວິວລີ ຮູ້ສຶກປະຫຼາດໃຈຫຼາຍເມື່ອຂ້ອຍນຳເດັກຍິງຄົນນີ້ໄປໃຫ້ລາວ ແລະໄດ້ເປັນໄປຕາມທີ່ຂ້ອຍຄິດອີ່ຫຼີ ລາວບໍ່ໄດ້ປະຕິເສດຂອງຂວັນທີ່ຂ້ອຍມອບໃຫ້ເລີຍ.

ສະນັ້ນ ຂ້ອຍຈຶ່ງປະນາງໄວ້ເຮືອນຂອງລາວ. ຂ້ອຍບອກລາວວ່າ, ຖ້າລາວປິ່ນປົວນາງນ້ອຍຄົນນີ້ໄດ້ ລາວກໍຄວນຈະຮັບໄວ້ເປັນຄົນໃຊ້. ຖ້າຫາກປິ່ນປົວບໍ່ໄດ້ ລາວຈະເຮັດແນວໃດກັບນາງກໍສຸດແລ້ວແຕ່ໃຈລາວ.

ຂ້ອຍຮູ້ສຶກເສຍດາຍກັບເງິນທີ່ຂ້ອຍລົງທຶນຊື້ນາງມາ ແຕ່ວ່າຂ້ອຍກໍໂລ່ງໃຈທີ່ຂ້ອຍບໍ່ຕ້ອງຄິດກ່ຽວກັບເລື່ອງນີ້ອີກຕໍ່ໄປ. ເທື່ອໜ້າຂ້ອຍຈະຄິດດີໆກ່ອນທີ່ຈະຊື້ຄົນໃຊ້ຄົນໃໝ່.

# ຕອນທີ 3

ເລົ່າໂດຍ ອາຈານ ວິວລີ

ບ້ານແກ້ງກອກ

ປີ 1929

ໃນມື້ທີ່ນາຍຄໍາມາເຄາະປະຕູເຮືອນນັ້ນ ຂ້ອຍຮູ້ສຶກຕົກໃຈຫຼາຍ ທີ່ລາວໄດ້ນໍາເອົາຂອງຂວັນອັນແປກປະຫຼາດທີ່ສຸດ ເຊິ່ງຂ້ອຍບໍ່ເຄີຍໄດ້ຮັບມາກ່ອນ ມາມອບໃຫ້ຂ້ອຍ. ຂອງຂວັນນັ້ນກໍຄືເດັກຍິງນ້ອຍຄົນໜຶ່ງ ທີ່ມີຈຸດດ່າງຂອງພະຍາດຂີ້ທູດເທິງໃບໜ້າຂອງນາງ.

ແນ່ນອນວ່າ ຂ້ອຍບໍ່ປະຕິເສດຂອງຂວັນທີ່ລາວມອບໃຫ້. ຖ້າຫາກຂ້ອຍປະຕິເສດຂອງຂວັນນີ້ ກໍຈະເປັນການບໍ່ສຸພາບ. ຈະປະຕິເສດ ຫຼືໄລ່ເດັກນ້ອຍນີ້ ທີ່ຊ່ວຍຕົນເອງບໍ່ໄດ້ ແລະບໍ່ມີບ່ອນໄປໄດ້ແນວໃດ? ຖ້າຂ້ອຍໄລ່ເດັກນ້ອຍຄົນນີ້ໄປ ຂ້ອຍຈະອະທິບາຍກັບພຣະເຈົ້າຂອງຂ້ອຍໄດ້ແນວໃດ? ເພາະວ່າພຣະເຈົ້າຮັກເດັກນ້ອຍ ແລະຍອມຮັບຄົນທີ່ເປັນພະຍາດຂີ້ທູດ.



ດັ່ງນັ້ນ ຂ້ອຍຈຶ່ງຮັບເອົານາງມາຢູ່ນຳຄອບຄົວຂອງຂ້ອຍ. ເມຍຂອງຂ້ອຍຊື່ວ່າ ແນນຊີ ໄດ້ອາບນ້ຳ ແລະນຸ່ງເສື້ອຜ້າທີ່ສະອາດໃຫ້ນາງ. ພວກເຮົາໄດ້ເບິ່ງແຍງນາງດ້ວຍຕົວເອງ. ຄົນໃຊ້ພາຍໃນເຮືອນຂອງເຮົາ ກໍຢ້ານວ່າ ຈະຕິດພະຍາດຂີ້ທູດຈາກນາງ.

ພວກເຮົາໄດ້ເລີ່ມໃຊ້ຢາປິ່ນປົວນາງ ຕັ້ງແຕ່ມື້ທຳອິດທີ່ນາງເຂົ້າມາຢູ່ກັບພວກເຮົາ ດ້ວຍການໃຊ້ຢານ້ຳມັນ ຈາກກົກດອນກະເປົາ. ຂ້ອຍໄດ້ຂ່າວວ່າ ຢານີ້ມີຊະນິດສັກໄດ້ ແຕ່ວ່າຢູ່ໃນປະເທດລາວຍັງບໍ່ທັນມີຢາສັກຊະນິດນີ້.

ດັ່ງນັ້ນ ພວກເຮົາຈຶ່ງເອົາຢາເມັດໃຫ້ນາງກິນ. ເມື່ອກິນ ຢາເມັດຊະນິດນີ້ແລ້ວ ຫຼາຍຄົນກໍມັກຈະເກີດອາການປວດຮາກ ແລ້ວບໍ່ຍອມກິນຢາອີກ.

ສະນັ້ນ ພວກເຮົາຈຶ່ງໄດ້ພາວັນນາອະທິຖານກັບພຣະເຈົ້າ ໃຫ້ນາງປາສະຈາກອາການປວດຮາກນີ້. ເມື່ອສຸພິນກິນຢານີ້ແລ້ວ ກໍບໍ່ຄ່ອຍຈະມີອາການແພ້ຢາປານໃດ, ມີແຕ່ບາງເທື່ອເຮັດໃຫ້ກິນເຂົ້າບໍ່ແຊບ.  ນາງຍອມກິນຢານີ້ຕໍ່ໄປ ເພາະຢາກຫາຍດີ ໂດຍທີ່ບໍ່ໄດ້ປະຕິເສດຫຍັງ ແລະພວກເຮົາໄດ້ເອົາຢາຊະນິດນ້ຳມັນ ທາໜ້າຂອງນາງ. ພວກເຮົາປິ່ນປົວນາງດ້ວຍການພາວັນນາອະທິຖານ ແລະດ້ວຍການໃຊ້ຢາ, ຕໍ່ມາ ຈຶ່ງເຫັນບາດແຜເທິງໜ້າຂອງລາວກໍເລີ່ມຫາຍດີຂຶ້ນເລື້ອຍໆ.

ແຕ່ການຮັກສາຫົວໃຈຂອງນາງ ແມ່ນປິ່ນປົວຍາກກວ່າການຮັກສາບາດແຜ. ເຖິງແມ່ນພວກເຮົາຮັກແລະດີຕໍ່ນາງຫຼາຍ, ທຸກໆຄັ້ງ ທີ່ພວກເຮົາຍື່ນມືເພື່ອເອົາຢາທາໃສ່ໜ້ານາງ ນາງຊ້ຳພັດຕົກໃຈ ຫົດຖອຍດ້ວຍຄວາມຢ້ານ. ຄາບເຂົ້າທຸກໆຄາບ ນາງຈະ



ແບ່ງອາຫານສ່ວນໜຶ່ງໄປເຊື່ອງໄວ້ ເພາະຢ້ານວ່າ ຈະບໍ່ມີອາຫານກິນໃນຄາບຕໍ່ໄປ.

ນາງບໍ່ຄ່ອຍປາກຄ່ອຍລົມພໍປານໃດ. ທຳອິດ ພວກເຮົາຄິດວ່ານາງເປັນເຊັ່ນນີ້ ກໍເພາະນາງຍັງບໍ່ຮູ້ພາສາລາວດີ, ແຕ່ເມື່ອພວກເຮົາພາໝູ່ຜູ້ໜຶ່ງທີ່ເວົ້າພາສາຈີນມາລົມກັບນາງ ນາງກໍຍັງບໍ່ເວົ້າບໍ່ຈາຫຍັງຢູ່ດີ.

ມື້ອື່ນ ແນນຊີ ແລະຂ້ອຍຈະເດີນທາງກັບໄປປະເທດສະວິດເຊີແລນ, ແຜນການດັ່ງກ່າວນີ້ໄດ້ຖືກວາງໄວ້ກ່ອນແລ້ວ ຕັ້ງແຕ່

ຕອນທີ່ສຸພິນຍັງບໍ່ທັນມາຢູ່ນຳພວກເຮົາ. ພວກເຮົາໄດ້ຂໍພຣະເຈົ້າຈັດແຈງບ່ອນໃໝ່ສຳລັບໃຫ້ສຸພິນຢູ່ ເມື່ອເວລາທີ່ພວກເຮົາບໍ່ຢູ່.

ພຣະເຈົ້າໄດ້ປະທານຄອບຄົວໃໝ່ສຳລັບສຸພິນຄື ດຣ ຟຣິດ ແລະເມຍຂອງລາວ  ຕົກລົງທີ່ຈະຮັບສຸພິນໄປຢູ່ກັບຄອບຄົວຂອງພວກເຂົາ.

ດຣ ຟຣິດ ຈະສືບຕໍ່ດູແລສຸພິນຕໍ່ຈາກພວກເຮົາ ແລະຖ້າມີຢາຊະນິດໃໝ່ ດຣ ຟຣິດ ກໍຈະຮູ້ຈັກວິທີນຳໃຊ້ເພື່ອສືບຕໍ່ປິ່ນປົວນາງຕໍ່ໄປ.

ພວກເຮົາຍັງສືບຕໍ່ພາວັນນາອະທິຖານຕໍ່ໄປ ເພື່ອຂໍໃຫ້ພຣະເຈົ້າສືບຕໍ່ປິ່ນປົວສຸພິນ ທີ່ເປັນດັ່ງແກ້ວຕາດວງໃຈຂອງພວກເຮົາ.

# ຕອນທີ 4

ເລົ່າໂດຍ ດຣ ຟຣິດ

ບ້ານສອງຄອນ

ປີ 1934

ໃນຄ່ຳຄືນນີ້ ຂ້ອຍຮູ້ສຶກໜັກໃຈຫຼາຍ ເພາະຖືວ່າເປັນປະສົບການທີ່ໂຫດຮ້າຍໃນຊີວິດຂອງຂ້ອຍ. ຄວາມໜັກໃຈໃນມື້ນີ້ ເກືອບເທົ່າກັນກັບມື້ທີ່ເມຍຄົນທຳອິດຂອງຂ້ອຍເສຍຊີວິດ. ແຕ່ໃນມື້ທີ່ເມຍຕາຍນັ້ນ  ຂ້ອຍພັດຮູ້ສຶກອົບອຸ່ນໃຈແດ່ ເພາະຮູ້ວ່າເມຍໄດ້ໄປຢູ່ກັບພຣະເຈົ້າ ໃນສະຫວັນ. ເຊິ່ງມັນແຕກຕ່າງກັບຄວາມໜັກໃຈໃນມື້ນີ້ຫຼາຍເທົ່າ.

ມື້ນີ້ ຂ້ອຍບໍ່ຮູ້ວ່າ ສຸພິນ ຈະເປັນແນວໃດໃນບ່ອນທີ່ຂ້ອຍໄດ້ປະລາວໄວ້ນັ້ນ. ໃນຕອນນີ້ ສຸພິນໄດ້ປ່ຽນແປງຫຼາຍແລ້ວ ຖ້າທຽບກັບ 5 ປີທີ່ແລ້ວ. ເວລາທີ່ ອາຈານ ວິວລີ ນຳນາງມາປະໄວ້ທີ່ເຮືອນ



ຂອງພວກເຮົາ. ເມື່ອກ່ອນນາງເປັນເດັກນ້ອຍ ທີ່ຂີ້ຢ້ານແລະຂີ້ອາຍຫຼາຍ!

ເວລານັ້ນ ທຸກໆເທື່ອເມຍຂອງຂ້ອຍຊື່ ໄອດາ ທາຍາໃຫ້ນາງ ນາງຈະຕົກໃຈ ແລະກົ້ມຫົວຫຼົບຫຼີກ. ພະຍາດຂີ້ທູດເລີ່ມຫາຍໄປ ນາງນັບມື້ນັບດີຂຶ້ນເລື້ອຍໆ ແລະພວກເຮົາໄດ້ມອບຄວາມຮັກ ຄວາມເມດຕາໃຫ້ນາງ ນາງກໍເລີ່ມເບັ່ງບານສົດໃສຂຶ້ນມາ.

ຂ້ອຍຈື່ໄດ້ວ່າ ຄັ້ງທຳອິດທີ່ສຸພິນມີສຽງຫົວ ແມ່ນຕອນທີ່ນາງກຳລັງຫຼິ້ນກັບລູກແມວນ້ອຍ ໃນຂະນະທີ່ແມວນ້ອຍກຳລັງໄລ່ກັດ

ທາງຂອງຕົນເອງ ແລະຈື່ໄດ້ຄັ້ງທໍາອິດ ທີ່ສຸພິນຫຼິ້ນຮ່ວມກັບເດັກນ້ອຍຄົນອື່ນ.  ສອງສິ່ງນີ້ ເປັນເລື່ອງປົກກະຕິຂອງເດັກນ້ອຍທົ່ວໄປ ແຕ່ສໍາລັບສຸພິນແລ້ວ ມັນເປັນບາດກ້າວໃໝ່ທີ່ກ້າວໜ້າຫຼາຍ.

ພວກເຮົາໄດ້ສົ່ງນາງເຂົ້າໂຮງຮຽນ ໃນໝູ່ບ້ານຂອງພວກເຮົາ ແລະປະກົດວ່າ ນາງເປັນຄົນທີ່ຮຽນໄດ້ໄວ ຈົນໃນອີກບໍ່ດົນ ນາງກໍກາຍເປັນຄົນທີ່ຮຽນເກັ່ງກວ່າໝູ່ໃນຫ້ອງຮຽນ.

ພວກເຮົາໄດ້ສອນພຣະຄໍາພີໃຫ້ສຸພິນໃນເຮືອນຂອງພວກເຮົາ. ຕໍ່ມາບໍ່ດົນ ສຸພິນກໍໄດ້ຍອມຮັບພຣະເຢຊູເຈົ້າເປັນພຣະເຈົ້າພຣະຜູ້ໄຖ່ບາບກໍາຂອງນາງ. ນາງໄດ້ປ່ຽນເປັນຄົນໃໝ່  ລວມທັງບຸກຄະລິກກະພາບຂອງນາງດ້ວຍ ແລະນາງໄດ້ນໍາຄວາມສຸກເຂົ້າມາໃນເຮືອນຂອງພວກເຮົາ.

ຫຼັງຈາກນັ້ນ ພວກເຮົາສັງເກດເຫັນວ່າ ພະຍາດຂອງນາງກໍໄດ້ເລີ່ມເກີດຂຶ້ນມາໃໝ່. ເຖິງແມ່ນວ່າພວກເຮົາຈະຫາຍາໃຫ້ຕະຫຼອດ ແຕ່ກໍຍັງເຫັນໄດ້ຢ່າງແຈ່ມແຈ້ງວ່າ ພະຍາດກໍາລັງຮຸນ

ແຮງຂຶ້ນ. ສຸພິນຈຳເປັນຕ້ອງໄດ້ອອກຈາກໂຮງຮຽນ. ສຸພິນໄປຫຼິ້ນນຳໝູ່ໃນບ້ານບໍ່ໄດ້ອີກຕໍ່ໄປ ເພາະຢ້ານວ່າ ຄົນອື່ນຈະຕິດພະຍາດນຳນາງ.

ຂ້ອຍຄິດວ່າ ຂ້ອຍຮູ້ສຶກຫົວໃຈແຕກສະຫຼາຍບໍ່ໜ້ອຍໄປກວ່າສຸພິນ ແຕ່ວ່າຊີວິດໃໝ່ທີ່ສຸພິນໄດ້ຮັບຈາກອົງພຣະເຢຊູເຈົ້າ ເຮັດໃຫ້ສຸພິນສາມາດອົດທົນຢູ່ໄດ້. ນາງຍັງຄົງສົດໃສ ແລະເຊື່ອຟັງພວກເຮົາ ຜູ້ເປັນພໍ່ແມ່ລ້ຽງຢູ່.

ເປັນໄປບໍ່ໄດ້ ທີ່ສຸພິນຈະດຳລົງຊີວິດຢູ່ກັບພວກເຮົາຕໍ່ໄປ ແຕ່ພວກເຮົາກໍຈະບໍ່ຍອມເອົານາງໄປປ່ອຍຢູ່ປ່າພຽງລຳພັງຢ່າງເດັດຂາດ.

ພວກເຮົາຄິດຫາທາງອື່ນ ຄືຈະສົ່ງນາງໄປບ່ອນບຳບັດຮັກສາພະຍາດຂີ້ທູດຂອງລັດຖະບານລາວ, ແຕ່ວ່າຖ້າເຮັດຢ່າງນັ້ນ ນາງກໍຈະເປັນຍິງຄຣິສຕຽນພຽງຄົນດຽວທີ່ຢູ່ທີ່ນັ້ນ ແລະພວກເຮົາຄິດວ່າເປັນການຍາກເກີນໄປ ທີ່ເດັກຄຣິສຕຽນອາຍຸພຽງ 12 ປີ ຈະໄປຢູ່

ທ່າມກາງຄົນທີ່ບໍ່ເປັນຄຣິສຕຽນ ໂດຍທີ່ບໍ່ມີຄຣິສຕຽນຄົນອື່ນຢູ່ນຳ ແລະບໍ່ມີຜູ້ໃດຊ່ວຍອູ້ມຊູຢູ່ໃນບ່ອນນັ້ນ.

ພວກເຮົາຮູ້ວ່າ ຢູ່ທາງພາກເໜືອຂອງປະເທດໄທ ມີໂຮງໝໍສຳລັບຜູ້ທີ່ເປັນພະຍາດຂີ້ທູດ. ສະຖານທີ່ແຫ່ງນີ້ ເປັນບ່ອນໜຶ່ງທີ່ຕິດອັນດັບຂອງໂລກ ແລະຜູ້ອຳນວຍການຂອງໂຮງໝໍແຫ່ງນີ້ ກໍແມ່ນຄົນຄຣິສຕຽນ. ພວກເຮົາຄິດວ່າ ບ່ອນນີ້ຈະເປັນບ່ອນທີ່ດີທີ່ສຸດສຳລັບສຸພິນ ແລະພາສາທ້ອງຖິ່ນທາງພາກເໜືອຂອງໄທກັບພາສາລາວກໍຄ້າຍຄືກັນ.

ໃນມື້ໜຶ່ງຂອງລະດູໜາວທີ່ທ້ອງຟ້າແຈ່ມໃສດີ ຂ້ອຍກັບສຸພິນໄດ້ນັ່ງເທິງຫຼັງມ້າອອກຈາກເຮືອນໄປ. ເມຍຂອງຂ້ອຍ ໄອດາ ບໍ່ສາມາດປົກປິດຢຶດນ້ຳຕາທີ່ໄຫຼລົງສອງແກ້ມໄດ້, ເມື່ອລາວເຫັນຂ້ອຍກັບສຸພິນກຳລັງຂີ່ຫຼັງມ້າອອກໄປ.

ເຖິງແມ່ນວ່າຈະເປັນການເດີນທາງທີ່ໂສກເສົ້າ ແຕ່ຂ້ອຍກັບສຸພິນກໍໄດ້ຮັບອາກາດອັນສົດຊື່ນ ແລະມີຄວາມເພີດເພີນໄປນຳ.



ພວກເຮົາໄດ້ລົມກັນຫຼາຍເລື່ອງ ແລະຂ້ອຍພະຍາຍາມໃຫ້ກຳລັງໃຈ

ແກ່ສຸພິນວ່າ ນາງຈະໄດ້ຢູ່ຮ່ວມກັບຄົນທີ່ຮັກພຣະເຢຊູເຈົ້າດ້ວຍ.

ຢູ່ທີ່ຊາຍແດນ ລາວ - ໄທ ພວກເຮົາໄດ້ຂີ່ເຮືອຂ້າມແມ່ນ້ຳຂອງ ມຸ່ງໜ້າໄປສູ່ປະເທດໄທ. ພວກເຮົາໄດ້ເໝົາລົດໄປອີກ 120 ກິໂລແມັດ ເພື່ອໄປແຂວງອຸບົນລາດຊະທານີ.

ຫຼັງຈາກເດີນທາງກວ່າ 8 ຊົ່ວໂມງ ພວກເຮົາກໍໄດ້ມາຮອດເຮືອນຂອງໝູ່ ທີ່ຕ້ອນຮັບພວກເຮົາດ້ວຍຄວາມອົບອຸ່ນ. ພວກເຮົາຮູ້ສຶກວ່າເມື່ອຍຫຼາຍ ຍ້ອນການເດີນທາງມາໄກ ເລີຍໄດ້ນອນຫຼັບຢ່າງສະໜິດ ແລະຮູ້ສຶກວ່າການເດີນທາງຄັ້ງນີ້ ແມ່ນເປັນໄປດ້ວຍດີ.  ການເດີນທາງຕໍ່ໄປ ກໍຄົງຈະສະດວກກວ່ານີ້ຫຼາຍ ເພາະວ່າພວກເຮົາຈະໄດ້ເດີນທາງດ້ວຍລົດໄຟ.

ໃນຕອນເຊົ້າຂອງມື້ຕໍ່ມາ ພວກເຮົາໄດ້ໄປທີ່ສະຖານີລົດໄຟ. ແຕ່ເມື່ອພວກເຮົາພະຍາຍາມແຈ້ງປີ້ຂຶ້ນລົດໄຟ, ພວກເຂົາບໍ່ຍອມຮັບປີ້ທີ່ພວກເຮົາໄດ້ຊື້ໄວ້ແລ້ວນັ້ນ, ເພາະມີຂໍ້ຫ້າມ ບໍ່ໃຫ້ຄົນເປັນພະຍາດຂີ້ທູດ ເດີນທາງດ້ວຍລົດໄຟຢ່າງເດັດຂາດ.



ພວກເຮົາບໍ່ມີທັງທາງອື່ນທີ່ຈະໄປສູ່ພາກເໜືອຂອງປະເທດໄທໄດ້. ພວກເຮົາບໍ່ມີທາງເລືອກອື່ນ ນອກຈາກກັບຄືນສູ່ປະເທດ

ລາວ. ຂ້ອຍໄດ້ເລີ່ມເຂົ້າໃຈຄວາມຮູ້ສຶກຂອງຄົນທີ່ເປັນພະຍາດຂີ້ທູດທີ່ຖືກປະຖິ້ມ ຫຼືເນລະເທດໃຫ້ໄປຢູ່ໃນທີ່ຫ່າງໄກອອກໄປ. ໃນທີ່ສຸດ ສຸພິນລູກທີ່ຮັກ ກໍເລີຍຕ້ອງເຂົ້າໄປຢູ່ໃນໝູ່ບ້ານຂອງຄົນທີ່ເປັນພະຍາດຂີ້ທູດ ຂອງລັດຖະບານລາວ.

ພວກເຮົາຮູ້ສຶກດີໃຈຢ່າງລົ້ນເຫຼືອ ທີ່ພວກເຮົາສາມາດໄປຮອດປາກເຊ ໃນເວລານີ້ດຽວເທົ່ານັ້ນ ໂດຍການເດີນທາງດ້ວຍເຮືອແລະລົດ.

ຕອນເຊົ້າຂອງມື້ຕໍ່ມາ ຂ້ອຍໄດ້ໄປບ້ານຄົນຂີ້ທູດ ເຊິ່ງຫ່າງຈາກເມືອງປາກເຊ 7 ກິໂລແມັດ, ຂ້ອຍຕ້ອງໄປເບິ່ງໂຮງໝໍແຫ່ງນີ້ກ່ອນທີ່ຂ້ອຍຈະຕັດສິນໃຈສົ່ງສຸພິນໄປຢູ່ທີ່ນັ້ນ. ແຕ່ເມື່ອຂ້ອຍໄປຮອດ, ຂ້ອຍກໍຮູ້ສຶກສະບາຍໃຈຫຼາຍກວ່າທີ່ຂ້ອຍຄິດໄວ້ຫຼາຍເທົ່າ.

ມັນເປັນບ້ານທີ່ນ້ອຍ ມີພຽງຜູ້ໃຫຍ່ 29 ຄົນ ທີ່ເປັນພະຍາດຂີ້ທູດ, ແຕ່ເປັນບ້ານທີ່ມີຄວາມເປັນລະບຽບຮຽບຮ້ອຍ. ທ່ານໝໍໃຫຍ່ໃນບ້ານນີ້ ໄດ້ຮັບປະກັນຄວາມສະອາດຢູ່ຕະຫຼອດເວລາ.

ນາຍບ້ານທີ່ນັ້ນເປັນຄົນຂີ້ທູດຄືກັນ ລາວກໍໄດ້ອາໄສຢູ່ທີ່ນັ້ນກັບເມຍແລະລູກຊາຍ ທີ່ບໍ່ເປັນພະຍາດຂີ້ທູດ. ເມຍກັບລູກຊາຍໄດ້ດຳລົງຊີວິດຢູ່ຮ່ວມກັບນາຍບ້ານ ເປັນເວລາ 8 ປີແລ້ວ ແຕ່ທັງສອງບໍ່ໄດ້ຕິດພະຍາດຂີ້ທູດເລີຍ.

ເມື່ອຂ້ອຍໄປໃນມື້ນັ້ນ ຂ້ອຍໄດ້ເລົ່າເລື່ອງພຣະເຈົ້າຜູ້ສ້າງໂລກ ແລະໄດ້ຕອບຄຳຖາມຫຼາຍຄຳຖາມ. ມີໜ້ອຍເທື່ອໃນປະສົບການຂອງຂ້ອຍ ທີ່ມີຜູ້ຄົນຕັ້ງໃຈຟັງຂ້ອຍເລົ່າເລື່ອງພຣະເຈົ້າ ຢ່າງໃຈຈົດໃຈຈໍ່ ເທົ່າກັບໄທບ້ານພວກນີ້. ພວກເຂົາໄດ້ໃຊ້ຄວາມຄິດໄປຕາມທີ່ຂ້ອຍເລົ່າ ແລະເກີດມີຄວາມສົນໃຈຫຼາຍ. ຂ້ອຍເລີ່ມຄິດວ່າພຣະເຈົ້າຄົງຈະມີແຜນການທີ່ດີສຳລັບສຸພິນ ແລະຄົນຈຳນວນນີ້ ທີ່ສຸພິນຈະໄປຢູ່ນຳ. ພຣະເຈົ້າອາດຈະໃຊ້ສຸພິນເປັນຜູ້ແນະນຳກຸ່ມຄົນນີ້ ໃຫ້ຮູ້ຈັກພຣະເຈົ້າ ຊຶ່ງເປັນພຣະຜູ້ໂຜດຊ່ວຍໃຫ້ພົ້ນຂອງສຸພິນ.

ເຖິງແມ່ນວ່າຈະເປັນແນວນັ້ນກໍຕາມ, ແຕ່ຂ້ອຍກໍຍັງບໍ່ຢາກສົ່ງສຸພິນໄປຢູ່ທີ່ນັ້ນ. ຍ້ອນວ່າເປັນຫຍັງຜູ້ທີ່ບໍ່ມີຄວາມຜິດ ຍັງຕ້ອງ



ຫົນທຸກທໍລະມານຫຼາຍປານນີ້? ແຕ່ຄວາມທຸກຂອງສຸພິນຈະເປັນຫົນທາງທີ່ຈະນໍາພຣະພອນໄປອວຍພອນພວກຄົນເຫຼົ່ານັ້ນ. ຂ້ອຍຈຶ່ງສໍານຶກໄດ້ວ່າ ຄວາມທຸກຂອງສຸພິນນັ້ນ ແມ່ນນາງຈະຮັບຄວາມທຸກດ້ວຍຄວາມຊົມຊື່ນຍິນດີ ຖ້າຫາກມັນຈະເປັນຫົນທາງທີ່ເຮັດໃຫ້ຜູ້ອື່ນໄດ້ຮູ້ຈັກກັບພຣະເຈົ້າອົງຍິ່ງໃຫຍ່ ແຕ່ຫົວໃຈຂອງຜູ້ເປັນພໍ່ຄືຂ້ອຍ ແມ່ນມີຄວາມທຸກຫຼາຍກັບສຸພິນ.

ເມື່ອກັບຄືນມາຮອດເມືອງປາກເຊ ຂ້ອຍໄດ້ເລີ່ມດໍາເນີນການລົງທະບຽນ ແລະແລ່ນເອກະສານຫຼາຍແນວ ເພື່ອໃຫ້ສຸພິນໄດ້ເຂົ້າ

ໄປຢູ່ທີ່ບ້ານຂີ້ທູດແຫ່ງນັ້ນ. ການດຳເນີນການນີ້ ຕ້ອງໃຊ້ເວລາດົນນານພໍສົມຄວນ, ເພາະເຫດນີ້ ສຸພິນຈຳເປັນຕ້ອງເຂົ້າໂຮງໝໍປາກເຊລໍຖ້າກ່ອນ ແລະໄດ້ຖືກແຍກຫ້ອງຈາກຄົນໄຂ້ທົ່ວໄປ ເພາະວ່າພະຍາດຂີ້ທູດຂອງສຸພິນເປັນພະຍາດຕິດຕໍ່.

ໃນຕອນເຊົ້າມື້ນີ້ ຂ້ອຍໄດ້ເອົານາງປະໄວ້ທີ່ໂຮງໝໍ ແລະສັນຍາວ່າຈະໄປຢາມນາງທີ່ບ້ານຂີ້ທູດຫຼາຍໆເທື່ອ ເທົ່າທີ່ຈະໄປໄດ້.

ໃນຂະນະທີ່ສຸພິນຢູ່ໂຮງໝໍ ຂ້ອຍໄດ້ກະກຽມແຜນການຂ້າງໜ້າສຳລັບສຸພິນ ແລະພະຍາຍາມໃຫ້ກຳລັງໃຈນາງ ໃນໜ້າທີ່ວຽກງານທີ່ພຣະເຈົ້າກຳລັງມອບໝາຍໃຫ້ນາງ. ສຸພິນມີຄວາມເຊື່ອໃນພຣະເຈົ້າທີ່ໝັ້ນຄົງ ແລະຕັ້ງເປົ້າໝາຍໃນການພາວັນນາອະທິຖານ ແລະອ່ານພຣະຄຳພີ, ຊຶ່ງພຣະເຈົ້າຈະຊ່ວຍເຮັດໃຫ້ນາງເຂັ້ມແຂງ.

ຂ້ອຍດີໃຈຫຼາຍ ທີ່ພຣະຄຳພີພາສາລາວໄດ້ພິມອອກທັນ ໃຫ້ສຸພິນໄດ້ມີໄວ້ອ່ານເປັນຂອງຕົນເອງ.

ພວກເຮົາໄດ້ພາວັນນາອະທິຖານເພື່ອສຸພິນມາຕະຫຼອດ. ຄວາມທຸກໃຈຍ້ອນຄິດຮອດນາງ ຈະເປັນສິ່ງເຕືອນໃຈໃຫ້ພວກເຮົາພາວັນນາອະທິຖານເພື່ອນາງບໍ່ຢຸດບໍ່ເຊົາ. ຂໍໃຫ້ບັນດາເທວະດາຂອງພຣະເຈົ້າ ຈົ່ງຢູ່ອ້ອມຮອບຕົວນາງ ແລະຂໍໃຫ້ສຸພິນຮູ້ວ່າພຣະເຈົ້າມີຄວາມຮັກ ແລະຢູ່ກັບນາງຕະຫລອດເວລາ.

# ຕອນທີ 5

ເລົ່າໂດຍ ທ້າວ ບຸນມີ ອີກຜູ້ໜຶ່ງທີ່ເປັນພະຍາດຂີ້ທູດ
ທີ່ບ້ານຂີ້ທູດຂອງລັດຖະບານລາວ ໃກ້ກັບເມືອງປາກເຊ
ປີ 1939

ຮູ້ບໍວ່າ ຊື່ຂອງຂ້ອຍມີຄວາມໝາຍວ່າມີບຸນ? ແຕ່ມັນກົງກັນຂ້າມຫຼາຍ! ເປັນໄປໄດ້ແນວໃດ ທີ່ຜູ້ມີບຸນຈະຕ້ອງມາຢູ່ໃນບ້ານຂີ້ທູດ?

ຂ້ອຍອາດຈະເຮັດຄວາມບາບທີ່ໂຫດຮ້າຍຫຼາຍໃນຊາດທີ່ແລ້ວນີ້ ຂ້ອຍຈຶ່ງໄດ້ຮັບກຳແບບນີ້. ພໍ່ແມ່ຂ້ອຍເອງໄດ້ໄລ່ຂ້ອຍອອກຈາກບ້ານ, ຂ້ອຍພະຍາຍາມຊອກວຽກເຮັດ ແຕ່ວ່າບໍ່ມີຜູ້ຮັບ. ນິ້ວຕີນນິ້ວມືຂອງຂ້ອຍໄດ້ກຸດຫັ້ຽນຍ້ອນພະຍາດຂີ້ທູດທີ່ໂຫດຮ້າຍ. ເທື່ອແລ້ວນີ້ ຂ້ອຍເບິ່ງໜ້າຂອງຂ້ອຍເອງ ຂ້ອຍຈົນບໍ່ຈື່ໂຕເອງ. ເມື່ອເຫັນດັ່ງນັ້ນແລ້ວ ຂ້ອຍຈຶ່ງຮູ້ວ່າ ເປັນຫຍັງເດັກນ້ອຍຈຶ່ງແລ່ນໜີ ແລະຮ້ອງດັງໆເມື່ອເຫັນໜ້າຂ້ອຍ.

ແຕ່ຢ່າງໜ້ອຍ ຂ້ອຍຍັງໂຊກດີກວ່າບາງຄົນ ທີ່ບ້ານແຫ່ງນີ້ຍັງຄົງຕ້ອນຮັບຂ້ອຍ. ແຕ່ທຸກໆເທື່ອ ທີ່ເບິ່ງໜ້າຄົນອື່ນທີ່ເປັນຂີ້ທູດແລ້ວ ຂ້ອຍກໍບໍ່ຕ້ອງສະເທືອນໃຈວ່າຕົນເອງມີໜ້າຕາຂີ້ລ້າຍພໍໆກັນກັບເຂົາ. ແລະອີກຢ່າງໜຶ່ງ ພວກເຂົາບໍ່ລຳຄານຟັງການຈົ່ມເຈັບ ຈົ່ມໄຂ້ບໍ່ສະບາຍຕະຫຼອດເວລາຂອງຄົນທີ່ເປັນຂີ້ທູດນຳກັນ.

ແຕ່ວ່າການຈົ່ມນີ້ ແມ່ນມີເຫດຜົນຕາມສະພາບທີ່ເປັນຄວາມຈິງ. ແຕ່ເມື່ອສຸພິນເຂົ້າມາບ້ານແຫ່ງນີ້ຫຼາຍເດືອນແລ້ວ, ນາງບໍ່ໄດ້ຈົ່ມວ່າ ແຕ່ນາງກັບມີຄວາມສັນຕິສຸກຢູ່ໃນໃຈເລິກໆ. ເມື່ອຂ້ອຍເຫັນດັ່ງນັ້ນ ຂ້ອຍຈຶ່ງຄິດວ່າບໍ່ໜ້າຈະເປັນໄປໄດ້ທີ່ສຸພິນຈະມີຄວາມສຸກຢ່າງແທ້ຈິງ. ເປັນໄປໄດ້ແນວໃດ? ທີ່ນາງຍ່າງໄປດ້ວຍໃບໜ້າຍິ້ມແຍ້ມແຈ່ມໃສ ແລະຮ້ອງເພງຕະຫຼອດເວລາ. ແລະທີ່ຮ້າຍແຮງໄປກວ່ານັ້ນ ນາງໄດ້ອ່ານປຶ້ມສັກສິດ ຫຼືປຶ້ມພຣະຄຳພີຂອງນາງຕະຫຼອດ. ນາງໄດ້ເວົ້າເຖິງພຣະເຈົ້າ ແລະພຣະເຢຊູເຈົ້າຂອງນາງ.

ສຳລັບຂ້ອຍແລ້ວ ການຢອກລໍ້ນາງ ແມ່ນຈະເຮັດໃຫ້ເວລາຜ່ານໄປໄວ, ຂ້ອຍກັບໝູ່ຈຳນວນໜຶ່ງໄດ້ຕັດສິນໃຈວ່າຈະທົດລອງນາງ ວ່ານາງຈະມີຄວາມສຸກຢ່າງແທ້ຈິງ ຫຼືບໍ່? ພວກເຮົາໄດ້ຫົວຂວັນນາງ ແລະເຍາະເຍີ້ຍພຣະເຈົ້າຂອງນາງ. ຕອນທີ່ນາງອ່ານພຣະຄຳພີ ພວກເຮົາກໍຈະຮ້ອງເພງດັງໆ ເພື່ອລົບກວນນາງ.

ແຕ່ເດັກຍິງໂງ່ຄົນນີ້ ບໍ່ໄດ້ຮ້ອງດ່າພວກເຮົາເລີຍ. ນາງພຽງແຕ່ເວົ້າວ່າ ຈະພາວັນນາອະທິຖານເພື່ອພວກເຮົາ ແລະນາງກໍຍ່າງໜີໄປ. ບາງເທື່ອພວກເຮົາຈະລັດນາງບໍ່ໃຫ້ຍ່າງຕໍ່ ແລະບັງຄັບໃຫ້ນາງຟັງພວກເຮົາ. ມີບາງເທື່ອ ທີ່ພວກເຮົາເຮັດໃຫ້ນາງຮ້ອງໄຫ້, ເຖິງວ່າເຮັດແນວນັ້ນກໍຕາມ ແຕ່ນາງກໍບໍ່ໄດ້ຮ້າຍດ່າກັບຕອບຄືນມາຫາພວກເຮົາຈັກເທື່ອ. ນາຍບ້ານໄດ້ຫ້າມພວກເຮົາບໍ່ໃຫ້ທຳຮ້າຍນາງ. ເພາະສະນັ້ນ ພວກເຮົາຕ້ອງລະວັງ ເພື່ອບໍ່ເຮັດຕໍ່ນາງຮຸນແຮງຈົນເກີນໄປ. ແຕ່ບາງເທື່ອ ຂ້ອຍເກືອບອົດໃຈບໍ່ໄດ້ທີ່ຈະຕົບໜ້ານາງ.



ໃນຄືນນີ້ ພວກເຮົາກຳລັງຫຼິ້ນໄພ້ເປັນການພະນັນ ແລະສຸພິນໄດ້ບອກວ່າພຣະເຢຊູເຈົ້າບໍ່ມັກຫຼິ້ນການພະນັນ. ຄຳເວົ້ານີ້ໄດ້ຂັດຄວາມສຸກຂອງພວກເຮົາ, ຂ້ອຍຮູ້ສຶກໃຈຮ້າຍ ຈົນເຖິງຂັ້ນໄດ້ຈັບເອົາພຣະຄຳພີຂອງນາງມາຈີກໃຫ້ເປັນຕ່ອນເປັນຕ່ອນ ເພື່ອເປັນບົດຮຽນໃຫ້ແກ່ນາງ.

ປີ 1942



# ຕອນທີ 6

ເລົ່າໂດຍ ນາຍບ້ານ ຄຳແພງ

ບ່ອນຮັກສາພະຍາດຂີ້ທູດຂອງລັດຖະບານລາວທີ່ເມືອງປາກເຊ

ປີ 1942

ເຖິງແມ່ນວ່າຂ້ອຍຖືກໂຊກຮ້າຍອັນເປັນຕາຢ້ານ ໂດຍທີ່ຂ້ອຍເປັນຜູ້ໜຶ່ງທີ່ເປັນພະຍາດຂີ້ທູດ, ແຕ່ຊີວິດຂອງຂ້ອຍກໍຍັງມີຄວາມໂຊກດີໃນບາງເລື່ອງ. ຕອນທີ່ຂ້ອຍຮູ້ວ່າ ຂ້ອຍຈະໄດ້ມາຢູ່ບ້ານພະຍາດຂີ້ທູດ ເມຍຂອງຂ້ອຍບໍ່ຍອມໃຫ້ຂ້ອຍມາຄົນດຽວ. ເມຍຂອງຂ້ອຍບອກວ່າ ລາວຈະບໍ່ປະຖິ້ມຂ້ອຍ ສະນັ້ນເມຍແລະລູກຊາຍຂອງຂ້ອຍ ຈຶ່ງມາຢູ່ໃນບ້ານຂີ້ທູດແຫ່ງນີ້ນໍາຂ້ອຍ.

ມີໜ້ອຍຄົນ ທີ່ຈະມີຍາດພີ່ນ້ອງຍອມມາຢູ່ຮ່ວມກັນໃນບ້ານຂີ້ທູດ ແຕ່ເມຍ ແລະລູກຊາຍຂອງຂ້ອຍ ບໍ່ໄດ້ມີອາການວ່າພວກເຂົາຈະຕິດພະຍາດຂີ້ທູດເລີຍ.

ໂຊກດີອີກຢ່າງໜຶ່ງຂອງຂ້ອຍຄື ຂ້ອຍເຄີຍເປັນນາຍບ້ານຢູ່ບ້ານເກົ່າ ພວກເຂົາເຈົ້າຈຶ່ງໄດ້ແຕ່ງຕັ້ງໃຫ້ຂ້ອຍເປັນນາຍບ້ານຂອງບ້ານພະຍາດຂີ້ທູດແຫ່ງນີ້. ຂ້ອຍໄດ້ຮັບຄວາມເຄົາລົບນັບຖືຈາກຜູ້ຄົນ ເຖິງແມ່ນວ່າ ຂ້ອຍຈະເປັນພະຍາດຂີ້ທູດຄືກັບຄົນອື່ນໆ ທີ່ຢູ່ໃນບ້ານນີ້.



ຍ້ອນວ່າເມຍ ແລະລູກຊາຍໄດ້ມາຢູ່ຮ່ວມກັນກັບຂ້ອຍ ຂ້ອຍຈຶ່ງມີເຮືອນເປັນຂອງຕົນເອງ ເຊິ່ງແຕກຕ່າງຈາກບຸກຄົນອື່ນໆ ທີ່ຕ້ອງອາໄສຢູ່ຮ່ວມກັນເປັນກຸ່ມໃນເຮືອນຫຼັງໜຶ່ງ.

ຂ້ອຍບໍ່ເຄີຍທີ່ຈະຕັ້ງໃຈເຊີນຄົນອື່ນມາອາໄສຢູ່ໃນເຮືອນຂອງພວກເຮົາ, ແຕ່ເມື່ອຂ້ອຍເຫັນພວກເຂົາທໍາຮ້າຍສຸພິນ ຂ້ອຍຈຶ່ງຕັ້ງໃຈຊວນສຸພິນມາຢູ່ເຮືອນນໍາຂອງພວກເຮົາ.

ເມຍແລະຂ້ອຍຮູ້ສຶກດີໃຈຫຼາຍທີ່ໄດ້ເອົາສຸພິນມາຢູ່ນໍາ ເພາະສຸພິນໄດ້ນໍາຄວາມສຸກມາສູ່ຄອບຄົວຂອງພວກເຮົາ. ສຸພິນມີຈິດໃຈ

ທີ່ເມດຕາຫຼາຍ, ນາງຈະຫາທາງຊ່ວຍຄົນອື່ນຕະຫຼອດ. ຂ້ອຍຄິດວ່າພະຍາດຂີ້ທູດຂອງສຸພິນເລີ່ມດີຂຶ້ນເລື້ອຍໆ ຂ້ອຍຄົງບໍ່ປະຫຼາດໃຈຖ້າຫາກມື້ໜຶ່ງນາງໄດ້ອອກໄປຈາກບ້ານແຫ່ງນີ້.

ມີຫຼາຍຄົນທີ່ມາຢ້ຽມຢາມນາງຈາກທາງນອກ ພວກເຂົາຮັກສຸພິນຫຼາຍ. ທຸກໆເທື່ອ ທີ່ພວກເຂົາມາຢ້ຽມຢາມສຸພິນ, ຂ້ອຍໄດ້ເຊີນຊາວບ້ານມາເຮືອນຂອງຂ້ອຍ ເພື່ອຟັງການເທດສະໜາຂອງແຂກທີ່ມາຢ້ຽມຢາມ. ຂ້ອຍບໍ່ຮູ້ຈັກວ່າຈະເຊື່ອແບບໃດດີ.

ຂ້ອຍນັບຖືຕາມພໍ່ແມ່ ປູ່ຍ່າຕາຍາຍ, ແຕ່ວ່າຊີວິດຂອງສຸພິນໄດ້ເຮັດໃຫ້ຂ້ອຍເລີ່ມສົງໄສວ່າ ທາງຂອງພຣະເຢຊູເຈົ້າ ອາດຈະເປັນຫົນທາງທີ່ຖືກຕ້ອງ. ພີ່ນ້ອງມິດສະຫາຍທຸກຄົນໄດ້ປະຖິ້ມພວກເຮົາແລ້ວ, ແຕ່ຜູ້ຄົນເຫຼົ່ານີ້ ຍອມມາຢ້ຽມຢາມ ແລະມາຢູ່ນໍາພວກເຮົາ.

ແຕ່ສິ່ງທີ່ເຮັດໃຫ້ຂ້ອຍຄິດຫຼາຍທີ່ສຸດ ກໍຄືຂ້ອຍເບິ່ງຊີວິດຂອງສຸພິນໃນແຕ່ລະມື້. ພຣະເຈົ້າ ຂອງສຸພິນໄດ້ເຮັດໃຫ້ສຸພິນມີຄວາມ

ເຂັ້ມແຂງ, ມີຄວາມສຸກ ແລະມີຄວາມຮັກ. ສຸພິນໄດ້ແນະນຳພວກ ເຮົາໃນທາງທີ່ຈະນຳໄປຫາພຣະເຈົ້າ.

# ຕອນທີ 7

ເລົ່າໂດຍ ນາງ ສຸພິນ

ບ່ອນຮັກສາພະຍາດຂີ້ທູດຂອງລັດຖະບານລາວ ທີ່ເມືອງປາກເຊ

ປີ 1946

ຂ້ອຍຮູ້ວ່າຊີວິດຂອງຂ້ອຍໃນໂລກນີ້ໃກ້ຈະສິ້ນສຸດລົງ. ຂ້ອຍບໍ່ມີຄວາມຢ້ານເລີຍ, ມີແຕ່ຄວາມສຸກ ເພາະຂ້ອຍຮູ້ວ່າ ອີກບໍ່ດົນພະຍາດຂອງຂ້ອຍກໍຈະຫາຍດີ ແລະຂ້ອຍຈະໄດ້ໄປຢູ່ກັບພຣະເຢຊູເຈົ້າ.

ມີຫຼາຍຄົນອື່ຕົນສົງສານຂ້ອຍ ແລະຖາມວ່າ, ຂ້ອຍມີຄວາມສຸກໄດ້ແນວໃດ? ທັງໆທີ່ຂ້ອຍມີບັນຫາໜັກໜ່ວງຂະໜາດນີ້. ເຖິງແມ່ນວ່າ ຂ້ອຍມີຄວາມທຸກທໍລະມານໃຈ ແຕ່ຂ້ອຍກໍຍັງມີຄວາມສຸກ. ສິ່ງທີ່ຜູ້ອື່ນຄິດວ່າເປັນສິ່ງທີ່ຍາກ ແລະນຳຄວາມທຸກມາສູ່ຕົວເຮົາ, ແຕ່ສິ່ງນັ້ນ ໄດ້ເຮັດໃຫ້ຂ້ອຍໄດ້ຮັບການອວຍພອນ.

ຂາຍ.



ລູກທີ່ຖືກພໍ່ແມ່ຂາຍ ແລະປະຖິ້ມ, ເປັນສິ່ງທີ່ໂຫດຮ້າຍ, ທົນທຸກທໍລະມານຢູ່ແລ້ວ ເຖິງວ່າການດຳລົງຊີວິດຢູ່ຮ່ວມກັບພໍ່ແມ່ກໍທົນທຸກຢູ່, ແຕ່ການທີ່ຖືກພໍ່ແມ່ປະຖິ້ມ ແມ່ນບໍ່ໄດ້ໜ້ອຍໄປກວ່າການຖືກຂາຍ.

ຂ້ອຍຈື່ພໍ່ແມ່ບໍ່ໄດ້, ແຕ່ຂ້ອຍຈື່ໄດ້ຕອນທີ່ພໍ່ຕີບຕີຂ້ອຍຢ່າງຮຸນແຮງແບບໄຮ້ຄວາມປານີ. ພໍ່ຄ້າຄົນລາວທີ່ຊື້ຂ້ອຍ ຍັງຕີຂ້ອຍບໍ່ເທົ່າກັບພໍ່ຊໍ້າ.

ການເປັນພະຍາດຂີ້ທູດ ຕອນທີ່ຂ້ອຍມີອາຍຸ 6 ປີນັ້ນ ເປັນສິ່ງທີ່ໂຫດຮ້າຍຫຼາຍ, ແຕ່ນັ້ນເປັນສິ່ງທີ່ເຮັດໃຫ້ຂ້ອຍໄດ້ຮັບອິດສະຫຼະຈາກການເປັນຄົນຮັບໃຊ້ ແລະຂ້ອຍຍັງໄດ້ຮັບຄວາມຮັກຄວາມອົບອຸ່ນ ຈາກພໍ່ແມ່ໃໝ່ທີ່ຮັກຂ້ອຍຫຼາຍ.

ຂ້ອຍໄດ້ຢູ່ນຳຄອບຄົວຂອງ ອາຈານ ວິວລີ ແລະຄອບຄົວຂອງ ດຣ ຟຣິດ. ຂ້ອຍໄດ້ຮັບກຳລັງໃຈ ແລະຄວາມຮັກຈາກສອງຄອບຄົວນີ້. ແລະພຣະເຢຊູເຈົ້າກໍໄດ້ຢູ່ກັບຂ້ອຍນັບຈາກນັ້ນມາຈົນເຖິງປະຈຸບັນນີ້.

ພວກເພິ່ນໄດ້ສອນໃຫ້ຂ້ອຍອ່ານໜັງສືໄດ້, ຂ້ອຍຈຶ່ງໄດ້ຮັບກຳລັງໃຈທຸກເທື່ອ ໃນຕອນທີ່ອ່ານພຣະຄຳພີຕະຫຼອດມາ ຈົນຮອດເວລາທີ່ຕາຂອງຂ້ອຍມົວ ແລະອ່ານບໍ່ໄດ້ອີກຕໍ່ໄປ. ໃນປະຈຸບັນນີ້



ອ່ານບໍ່ໄດ້ແລ້ວ ເພາະຕາຂອງຂ້ອຍມົວ, ແຕ່ວ່າຖ້ອຍຄໍາໃນ ພຣະຄໍາພີຢູ່ໃນໃຈຂ້ອຍແລ້ວ, ເພາະຂ້ອຍອ່ານ ແລະເລົ່າມາ ຕະຫຼອດຈົນຂຶ້ນໃຈແລ້ວ.

ຂໍ້ໜຶ່ງທີ່ຂ້ອຍມັກຫຼາຍກວ່າໝູ່ຄືພຣະທໍາ 2 ໂກຣິນໂທ ບົດທີ 4 ຂໍ້ທີ 16 ບອກວ່າ, “ເຫດສະນັ້ນ ພວກເຮົາຈຶ່ງບໍ່ທໍ້ຖອຍ. ເຖິງແມ່ນ ວ່າ ກາຍພາຍນອກຂອງພວກເຮົາພວມຊຸດໂຊມລົງກໍຕາມ ແຕ່ໃຈ ພາຍໃນຂອງພວກເຮົາກໍຍັງຈະເລີນຂຶ້ນໃໝ່ທຸກວັນ".

ຂ້ອຍຮູ້ດີວ່າ ຮ່າງກາຍພາຍນອກຂອງຂ້ອຍ ພວມຊຸດໂຊມລົງ ແຕ່ໃນເວລາດຽວກັນ ຂ້ອຍຮູ້ສຶກວ່າ ພຣະເຈົ້າ ກໍາລັງເຮັດໃຫ້

ຈິດວິນຍານຂ້ອຍຈະເລີນເຕີບໂຕຂຶ້ນ ຊຶ່ງແຕກຕ່າງຈາກຮ່າງກາຍທີ່ເລີ່ມອ່ອນເພຍລົງ.

ຂ້ອຍຈື່ໄດ້ວ່າ ຄຳແນະນຳຂອງອີ່ພໍ່ ຟຣີດ ທີ່ເພິ່ນໄດ້ແນະນຳຂ້ອຍ ກ່ອນອອກຈາກຄອບຄົວເພິ່ນມາຢູ່ໃນບ້ານນີ້. ເພິ່ນບອກຂ້ອຍວ່າ ພຣະເຈົ້າຄົງຈະໃຫ້ຂ້ອຍໄປຢູ່ໃນບ້ານຂີ້ທູດແຫ່ງນີ້ ເພື່ອເປັນຜູ້ແທນຂອງພຣະອົງ ໃນການບອກຄົນທັງຫຼາຍໃນທີ່ນີ້ ໃຫ້ຮູ້ຈັກກັບພຣະເຢຊູເຈົ້າ.

ຖ້າຂ້ອຍບໍ່ເປັນຜູ້ແນະນຳຄົນອື່ນ ເຊັ່ນນາງສະຫວ່າງ ແລະອີກຫຼາຍໆຄົນໃນບ້ານແຫ່ງນີ້ ໃຫ້ຮູ້ຈັກກັບພຣະເຈົ້າ ພວກເຂົາຈະຮູ້ຈັກກັບພຣະເຈົ້າໄດ້ແນວໃດ ແລະພວກເຂົາຈະມີໂອກາດໄດ້ຮັບຄວາມຮັກຈາກພຣະເຈົ້າໄດ້ແນວໃດ?

ແມ່ນແທ້, ຂ້ອຍເຊື່ອວ່າ ພຣະເຈົ້າຮັກຂ້ອຍແທ້ໆ ເຖິງແມ່ນວ່າຂ້ອຍມີຄວາມທຸກຍາກລຳບາກ, ເຖິງຈະມີສິ່ງທີ່ໂຫດຮ້າຍເຂົ້າມາໃນຊີວິດຂອງຂ້ອຍ, ແຕ່ວ່າ ຕັ້ງແຕ່ຂ້ອຍເຊື່ອ ພຣະເຢຊູເຈົ້າ

ຂ້ອຍຮູ້ວ່າ ຂ້ອຍໄດ້ຮັບຄວາມຮັກຈາກພຣະເຈົ້າມາຕະຫຼອດຈົນເຖິງ ປະຈຸບັນນີ້.

ໃນຕອນທີ່ຂ້ອຍມີຄວາມທຸກທໍລະມານຫຼາຍ ຂ້ອຍຄິດຮອດ ເພງບົດທໍາອິດ ທີ່ອາຈານ ວິວລີ ສອນໃຫ້ຂ້ອຍ. ເພງນີ້ມີຊື່ວ່າ “ພຣະເຈົ້າຊົງຮັກຂ້ານ້ອຍແທ້ ພຣະຄໍາພີສອນໄວ້ເປັນແນ່”.

ເຖິງແມ່ນຮ່າງກາຍຂອງຂ້ອຍ ຈະຂີ້ຮ້າຍຍ້ອນພະຍາດຂີ້ທູດ ກໍຕາມ, ແຕ່ພຣະເຢຊູເຈົ້າ ຍັງຮັກແພງຂ້ອຍ ແລະພ້ອມທີ່ຈະອ້າ ແຂນໂອບກອດຂ້ອຍ ໃນເມື່ອຂ້ອຍຈະອອກຈາກໂລກນີ້. ຂ້ອຍອົດ ບໍ່ໄດ້ ທີ່ຢາກຈະເຫັນໜ້າຂອງພຣະເຢຊູເຈົ້າໃນສະຫວັນ.



# ຕອນທີ 8

ເລົ່າໂດຍ  ນາງ ສະຫວ່າງ

ບ່ອນຮັກສາພະຍາດຂີ້ທູດຂອງລັດຖະບານລາວ ທີ່ເມືອງປາກເຊ

ວັນທີ 22/2/1946

ຄືນນັ້ນ ຂ້ອຍຮູ້ສຶກໂສກເສົ້າຫຼາຍ. ສຸພິນນ້ອງສາວສຸດທີ່ຮັກ ຫາກໍຈາກໄປ ຄືຈາກໂລກນີ້ ໄປຢູ່ນໍາພຣະເຢຊູເຈົ້າ. ຂ້ອຍຮູ້ວ່າສຸພິນ

ຈະໄດ້ຢູ່ໃນບ່ອນທີ່ດີກວ່ານີ້ ແລະມີຄວາມສຸກທີ່ສົມບູນທີ່ສຸດ, ແຕ່ວ່າຂ້ອຍເອງກັບຮູ້ສຶກໂດດດ່ຽວ ເພາະຮູ້ວ່າສຸພິນຈະບໍ່ຢູ່ນຳພວກເຮົາອີກແລ້ວ, ບໍ່ໄດ້ຍິນນາງໃຫ້ກຳລັງໃຈ ແລະສອນພວກເຮົາອີກຕໍ່ໄປ.

ຂ້ອຍເຈັບໃຈທຸກເທື່ອທີ່ໄດ້ເບິ່ງສຸພິນກຳລັງອ່ອນເພຍລົງເທື່ອລະເລັກເທື່ອລະໜ້ອຍ ຫຼາຍອາທິດຈົນມາເຖິງບັດນີ້. ກ່ອນໜ້ານັ້ນບໍ່ພໍເທົ່າໃດ ສຸພິນເບິ່ງຄືດີ, ເລີ່ມດີຂຶ້ນ, ແຕ່ວ່າຕໍ່ມາ ທັນທີທັນໃດນັ້ນ ນາງກໍໄດ້ມີອາການຊຸດໂຊມຢ່າງວ່ອງໄວ. ຫຼາຍປີທີ່ຜ່ານມາ ສຸພິນເປັນຜູ້ທີ່ດູ ແລຄົນອື່ນມາຕະຫຼອດ, ແຕ່ 2-3 ເດືອນທີ່ຜ່ານມານີ້ພວກເຮົາຕ້ອງໄດ້ດູແລສຸພິນ.

ພວກເຮົາຈະເຮັດແນວໃດ ເມື່ອບໍ່ມີຜູ້ນຳພາຂອງພວກເຮົາແລ້ວ? ເຖິງແມ່ນວ່າພວກເຮົາເປັນພວກຄົນ ທີ່ໜ້າລັງກຽດທີ່ສຸດພາຍໃນບ້ານ, ແຕ່ສຸພິນຍັງມີຄວາມຍິນດີທີ່ຈະໃຊ້ເວລາຢູ່ນຳພວກເຮົາ ແລະຊ່ວຍພວກເຮົາໃຫ້ຮູ້ເລື່ອງພຣະເຢຊູເຈົ້າ.

ຫຼາຍຄົນໃນກຸ່ມຂອງພວກເຮົາອ່ານບໍ່ໄດ້, ແຕ່ໃນທຸກມື້ ສຸພິນໄດ້ອ່ານໃຫ້ພວກເຮົາຟັງຈາກພຣະຄຳພີຂອງນາງເອງ.

ແມ່ນແຕ່ຕອນຫຼັງນີ້ ໃນເມື່ອມີອາການໜັກໜ່ວງ ແລະໂຫດຮ້າຍຫຼາຍ, ນາງກໍຍັງຄົງມີຄວາມສະຫງົບ ແລະມີສັນຕິສຸກ. ນາງປຽບເໝືອນຂອງຂວັນທີ່ພິເສດທີ່ສຸດຂອງພວກເຮົາ. ນາງໄດ້ເຮັດໃຫ້ພວກເຮົາມີຄວາມຫວັງ ແລະຄວາມຫວັງນັ້ນກໍຄືມີພຣະເຈົ້າທີ່ຮັກພວກເຮົາ ແລະພວກເຮົາຈະໄດ້ໄປຢູ່ນຳພຣະເຈົ້າຕະຫຼອດໄປເປັນນິດ, ໂດຍປາສະຈາກພະຍາດຂີ້ທູດ ທີ່ນຳຄວາມທຸກມາສູ່ຊີວິດຂອງພວກເຮົາ.

ສຸພິນໄດ້ສອນພວກເຮົາໂດຍຜ່ານຊີວິດຂອງນາງເອງ ວ່າພວກເຮົາມີຄວາມສຸກໃນປະຈຸບັນໄດ້ ທັງໆທີ່ພວກເຮົາມີຄວາມທຸກຫຼາຍກໍຕາມ. ຂ້ອຍບໍ່ເຄີຍພົບໃຜຈັກຄົນມາກ່ອນ ຕັ້ງແຕ່ຕອນທີ່ຂ້ອຍຍັງບໍ່ເປັນພະຍາດຂີ້ທູດ ຈົນມາເຖິງຕອນທີ່ຍ້າຍມາຢູ່ໃນບ້ານແຫ່ງນີ້ ບໍ່ເຄີຍເຫັນໃຜທີ່ມີຊີວິດທີ່ເຕັມໄປດ້ວຍ ຄວາມສຸກແບບນີ້ມາກ່ອນເລີຍ.

ສຸພິນເປັນຜູ້ທີ່ງົດງາມທີ່ສຸດ ທີ່ຂ້ອຍເຄີຍພົບມາໃນຕະຫຼອດຊີວິດນີ້. ເຖິງແມ່ນວ່ານາງຈະບໍ່ໄດ້ງາມທາງພາຍນອກ, ແຕ່ຂ້ອຍຄິດວ່າຖ້ານາງບໍ່ໄດ້ເປັນພະຍາດຂີ້ທູດ, ນາງກໍຄົງຈະງາມທັງພາຍໃນ ແລະພາຍນອກ. ແຕ່ຊີວິດຂອງນາງງົດງາມຫຼາຍ ຈົນເຮັດໃຫ້ຄົນອື່ນລືມວ່ານາງກຳລັງເປັນພະຍາດຂີ້ທູດຢູ່.

ໃນຄ່ຳຄືນນີ້ ຂ້ອຍໄດ້ຮ້ອງໄຫ້ ເພາະຄິດຮອດຜູ້ທີ່ເປັນໝູ່ແລະເປັນອາຈານຂອງຂ້ອຍ, ແຕ່ວ່າຢົດນ້ຳຕາຂອງຂ້ອຍ ແມ່ນໄຫຼອອກມາດ້ວຍຄວາມຄິດຮອດສຸພິນ ທີ່ເຄີຍຢູ່ຮ່ວມກັນ ແລະເປັນຢົດນ້ຳຕາແຫ່ງຄວາມສຸກທີ່ຮູ້ວ່ານາງໄດ້ຢູ່ກັບພຣະເຈົ້າຂອງນາງ ອົງທີ່ນາງຮັກຫຼາຍທີ່ສຸດແລ້ວ.

# ນາງສຸພິນ

ຂຽນໂດຍ ນາງ ຈິນ ແອນດຣິອານອພ
ແຕ້ມໂດຍ ນາງ ນາທາຊ່າ ສະຕຸດລີ

ເລື່ອງນີ້ເປັນເລື່ອງຈິງ ກ່ຽວກັບ ນາງສຸພິນ. ນາງສຸພິນ ໄດ້ຖືກຂາຍໃຫ້ໄປເປັນຄົນຮັບໃຊ້ ແລະນາງໄດ້ເປັນພະຍາດຂີ້ທູດຢ່າງຮ້າຍແຮງ. ສະນັ້ນ ນາງສຸພິນ ຈຶ່ງຖືກແຍກອອກໄປຢູ່ອີກບ້ານແຫ່ງໜຶ່ງ ທີ່ຫ່າງໄກອອກໄປ ແລະຖືກປິດບ້ານແບບຄົນໃນບໍ່ໃຫ້ອອກ, ຄົນນອກບໍ່ໃຫ້ເຂົ້າ ໃນບ້ານຂີ້ທູດແຫ່ງນັ້ນ.

ຂໍໃຫ້ ພຣະເຈົ້າ ຊົງອວຍພອນທ່ານ ໃນຂະນະທີ່ທ່ານອ່ານເລື່ອງຂອງ ນາງສຸພິນ.